ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

**********************

ກະຊວງການເງິນ  
ກົມພາສີ

ເລກທີ 01987 /ກພສ  
ນະຄອນຫຼວງວຽງຈັນ, ວັນທີ 11 ເມສາ 2020

# ແຈ້ງການ

**ເຖິງ :** ທ່ານ ຫົວໜ້າກອງຄຸ້ມຄອງພາສີ I-VII.  
ທ່ານ ຫົວໜ້າດ່ານພາສີສາກົນໃນຂອບເຂດທົ່ວປະເທດ.

**ເລື່ອງ :** ການນໍາເຂົ້າສິນຄ້າປະເພດ: ຜ້າປິດປາກ-ດັງ, ນໍ້າຢາລ້າງມື, ຖົງມື, ເຄື່ອງວັດແທກອຸນນະພູມ ແລະ ອຸປະກອນການແພດອື່ນໆທີ່ຈໍາເປັນ ດ້ວຍການຍົກເວັ້ນພາສີ-ອາກອນ ແລະ ຄ່າທໍານຽມຕ່າງໆ ເພື່ອມາຮັບໃຊ້ປ້ອງກັນ ແລະ ຕ້ານພະຍາດ (COVID-19).

- ອີງຕາມ ກົດໝາຍວ່າດ້ວຍພາສີ ສະບັບເລກທີ: 04/ສພຊ, ລົງວັນທີ 20/12/2011.
- ອີງຕາມ ຂໍ້ຕົກລົງຂອງນາຍົກລັດຖະມົນຕີ ສະບັບເລກທີ 31/ນຍ, ລົງວັນທີ 02/04/2020.
- ອີງຕາມ ຄໍາເຫັນຂອງ ທ່ານ ຮອງນາຍົກ, ລັດຖະມົນຕີ ກະຊວງການເງິນ ຄັ້ງວັນທີ 03/04/2020.
- ອີງຕາມ ໜັງສືສະເໜີຂອງ ກະຊວງອຸດສາຫະກໍາ ແລະ ການຄ້າ ສະບັບເລກທີ 0345/ອຄ,ກຄພນ, ລົງວັນທີ 31/03/2020.

## ກົມພາສີ ມອບຄວາມຮັບຜິດຊອບໃຫ້ປະຕິບັດ ດັ່ງນີ້:

1. ມອບໃຫ້ບັນດາກອງຄຸ້ມຄອງພາສີ I-VII ຊີ້ນໍາດ່ານພາສີສາກົນ ທີ່ຂຶ້ນກັບຄວາມຮັບຜິດຊອບຂອງຕົນອໍານວຍຄວາມສະດວກໃນການນໍາເຂົ້າສິນຄ້າປະເພດ: ຜ້າປິດປາກ-ດັງ, ນໍ້າຢາລ້າງມື, ຖົງມື, ເຄື່ອງວັດແທກອຸນນະພູມ ແລະ ອຸປະກອນການແພດອື່ນໆທີ່ຈໍາເປັນ ເພື່ອມາຮັບໃຊ້ປ້ອງກັນ ແລະ ຕ້ານພະຍາດ (COVID-19).
2. ການນໍາເຂົ້າຮູບການຊ່ວຍເຫຼືອໃຫ້ອີງໃສ່ໜັງສືສະເໜີ, ການຕົກລົງມອບຮັບຂອງຂະແໜງການລັດທີ່ກ່ຽວຂ້ອງ ຫຼືຄະນະສະເພາະກິດຕ້ານພະຍາດ (COVID-19) ໃນການປະຕິບັດ; ການນໍາເຂົ້າຂອງບຸກຄົນ, ນິຕິບຸກຄົນ ເປັນເຄື່ອງຕິດຕົວຜູ້ໂດຍສານເພື່ອມາຮັບໃຊ້ຄອບຄົວ ຫຼື ຫ້ອງການ ເປັນຈໍານວນນ້ອຍ ທີ່ບໍ່ແມ່ນລັກສະນະທາງການຄ້າ ແມ່ນໃຫ້ປະຕິບັດນະໂຍບາຍຍົກເວັ້ນ.
3. ສໍາລັບການນໍາເຂົ້າຂອງບັນດານິຕິບຸກຄົນ, ບໍລິສັດ, ຫ້າງຮ້ານ ລັກສະນະທາງການຄ້າເພື່ອມາຈໍາໜ່າຍ ແມ່ນໃຫ້ນໍາສະເໜີຈຸດປະສົງແຈ້ງຕໍ່ ຂະແໜງອຸດສາຫະກໍາ ແລະການຄ້າ ເພື່ອຄຸ້ມຄອງຕາມລະບຽບການຄ້າ, ແລະໃຫ້ປະຕິບັດນະໂຍບາຍຍົກເວັ້ນ.
4. ການປະກອບເອກະສານການນໍາເຂົ້າຍົກເວັ້ນພາສີ-ອາກອນ ແລະຄ່າທໍານຽມຕ່າງໆ ແມ່ນໃຫ້ອີງໃສ່ເງື່ອນໄຂຕ່າງໆຂ້າງເທິງນີ້ ແລະໃຫ້ປະຕິບັດນະໂຍບາຍຕາມຂໍ້ຕົກລົງຂອງ ນາຍົກລັດຖະມົນຕີ ສະບັບເລກທີ 31/ນຍ, ລົງວັນທີ 02 ເມສາ 2020 ແລະກົດໝາຍວ່າດ້ວຍພາສີ ສະບັບເລກທີ 04/ສພຊ, ລົງວັນທີ: 20 ທັນວາ 2011.
5. ໃຫ້ເຈົ້າໜ້າທີ່ພາສີ ຄຸ້ມຄອງ, ຕິດຕາມ ແລະກວດກາການສວຍໂອກາດລັກລອບເຄື່ອນຍ້າຍສິນຄ້າທີ່ບໍ່ຖືກຕ້ອງ ຖ້າພົບເຫັນການກະທໍາຜິດ ແລະ ສິ່ງຜິນຕໍ່ສັງຄົມ ໃຫ້ປະຕິບັດມາດຕະການຕາມລະບຽບກົດໝາຍຢ່າງເຂັ້ມງວດ.

6. ໃນການຈັດຕັ້ງປະຕິບັດຕົວຈິງ ຖ້າຫາກພົບບັນຫາຫຍຸ້ງຍາກໃຫ້ລາຍງານ ກົມພາສີ ເພື່ອມີວິທີແກ້ໄຂ ໃຫ້ທັນສະພາບການ.
7. ແຈ້ງການສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ, ຈົນກວ່າຈະມີການກໍານົດນະໂຍບາຍ ແລະ ນິຕິກໍາປ່ຽນແທນໃນການປະຕິບັດ.

ດັ່ງນັ້ນ, ຈຶ່ງແຈ້ງການມາເພື່ອຊາບ ແລະ ພ້ອມກັນຈັດຕັ້ງປະຕິບັດຢ່າງເຂັ້ມງວດ.

ຫົວໜ້າກົມພາສີ

ບ່ອນສົ່ງ:
- ທ່ານ ຮອງນາຍົກ, ລັດຖະມົນຕີກະຊວງການເງິນ 01 ສະບັບ "ຕາງລາຍງານ"
- ທ່ານ ຮອງລັດຖະມົນຕີກະຊວງການເງິນ 01 ສະບັບ " ຕາງລາຍງານ "
- ຄະນະກົມພາສີ 01 ສະບັບ " ເພື່ອຊີ້ນໍາປະຕິບັດ "
- ພະແນກການກົມພາສີ 01 ສະບັບ " ເພື່ອປະຕບັດ "
- ສໍາເນົາເກັບ 01 ສະບັບ.

ວົງຄໍາແຫງ ວົງທະຈັກ